| broadlawns MEDICAL CENTER<br>DES MOINES, IOWA | ປື້ມຄູ່ມືທີ່ອີງການ: ວຽກບໍລິຫານທົ່ວໄປ | | |
|---|---|---|---|
| | ວັນທີຂອງມູນເຫດ: 06/2019<br>ການທົບທວນ/ການປັບປຸງແກ້ໄຂຄັ້ງສຸດທ້າຍ: | ເວລາທີ: ສະບັບຮ່າງ<br>ໜ້າ 1 | |
| ເລື່ອງ: | ການຮຽກເກັບເງິນ ແລະ ການເກັບໜີ້ | | |

I. <u>ນະໂຍບາຍ</u>

ສູນການແພດ Broadlawns (BMC) ຈະຮຽກເກັບເງິນຈາກຄົນເຈັບຢ່າງຍຸຕິທຳ ແລະ ສະໜໍ່າສະເໝີສໍາລັບການບໍລິການດ້ານການດູແລສຸຂະ ພາບທີ່ໄດ້ໃຫ້ບໍລິການ. ຄົນເຈັບທຸກຄົນທີ່ມີຄວາມສາມາດທາງດ້ານການເງິນຄວນປະກອບສ່ວນໃນການຊໍາລະສ່ວນໜຶ່ງຂອງຄ່າດູແລສຸຂະພາບ ຂອງພວກເຂົາ. ສູນການແພດ Broadlawns ຈະດຳເນີນຕາມຂັ້ນຕອນເພື່ອເກັບຈຳນວນເງິນທີ່ເຖິງກຳນົດຈາກຄົນເຈັບສໍາລັບການບໍລິການດ້ານ ການດູແລສຸຂະພາບທີ່ໄດ້ໃຫ້ບໍລິການ.

II. <u>ຈຸດປະສົງ</u>

ຈຸດປະສົງຂອງນະໂຍບາຍນີ້ແມ່ນເພື່ອຊຸນໂຄງຮ່າງໃຫ້ກັບວິທີທີ່ ສູນການແພດ Broadlawns ໄດ້ນໍາໃຊ້ເພື່ອຮຽກເກັບເງິນຈາກຄົນເຈັບ ສໍາລັບການບໍລິການທາງດ້ານການດູແລສຸຂະພາບທີ່ໄດ້ໃຫ້ບໍລິການກັບພວກເຂົາ ແລະ ສໍາລັບເກັບເງິນໃນກໍລະນີທີ່ຄົນເຈັບບໍ່ໄດ້ປະກອບສ່ວນ ໃນຄ່າດູແລ ສຸຂະພາບເຫຼົ່ານັ້ນ. ຄົນເຈັບທີ່ສາມາດຊໍາລະສ່ວນໜຶ່ງຂອງຄ່າດູແລສຸຂະພາບຂອງພວກເຂົາມີພັນທະໃນການຊອກຫາຄວາມຄຸ້ມ ຄອງໃນການປະກັນໄພທີ່ສາມາດເຂົ້າເຖິງໄດ້ ແລະ ຊໍາລະສ່ວນໜຶ່ງຂອງການບໍລິການດ້ານການດູແລສຸຂະພາບຂອງພວກເຂົາ ແລະ ສູນການແພດ Broadlawns ມີໜ້າທີ່ຮຽກຊໍາລະຈາກຄົນເຈັບເຫຼົ່ານັ້ນ.

III. <u>ນິຍາມ</u>

A. **ການດູແລທາງການແພດສຸກເສີນ:** ຕາມທີ່ໄດ້ລະບຸໄວ້ໃນ ກົດໝາຍວ່າດ້ວຍ ການປິ່ນປົວທາງການແພດສຸກເສີນ ແລະ ການເຈັບທ້ອງ ອອກລູກ (EMTALA), ສະພາວະທາງການແພດທີ່ສະແດງອອກໂດຍອາການສາຫັດທີ່ມີຄວາມຮຸນແຮງພຽງພໍ ແລະ ການຂາດການດູແລ ທາງການແພດຢ່າງຮີບດ່ວນແມ່ນຖືກຄາດຫວັງຢ່າງສົມເຫດສົມຜົນວ່າຈະສົ່ງຜົນໃຫ້ສຸຂະພາບຂອງຄົນເຈັບຢູ່ໃນອັນຕະລາຍຢ່າງຮຸນແຮງ, ການເສື່ອມເສຍຢ່າງຮຸນແຮງຕໍ່ການເຮັດວຽກຂອງຮ່າງກາຍ ຫຼື ການມີບັນຫາຢ່າງຮຸນແຮງຂອງສ່ວນໃດໜຶ່ງຂອງອະໄວຍະວະຮ່າງກາຍ. ມັນຍັງລວມເຖິງຜູ້ຍິງຖືພາທີ່ກຳລັງປະສົບກັບການບີບຕົວຂອງມົດລູກ.

B. **ໂຮງໝໍ:** ລວມເຖິງໂຮງໝໍທີ່ມີການໃຫ້ບໍລິການງດູແລດ້ານສຸຂະພາບ ລວມທັງນິຕິບຸຄົນທີ່ກຳລັງປະຕິບັດໜ້າທີ່ແທນໂຮງໝໍດັ່ງກ່າວເພື່ອເກັບເງິນທີ່ເຖິງກຳນົດຈາກຄົນເຈັບໂດຍພາຍໃຕ້ນະໂຍບາຍນີ້ .

C. **ການຊ່ວຍເຫຼືອດ້ານການເງິນ:** ອີງຕາມໂຄງການດູແລຊຸມຊົນຂອງ Broadlawns ແລະ ນະໂຍບາຍການຊ່ວຍເຫຼືອດ້ານການເງິນຂັ້ນຮຸນແຮງ A-1006, ການຊ່ວຍເຫຼືອດ້ານການເງິນ, ວິທີການຊ່ວຍເຫຼືອທີ່ມອບໃຫ້ກັບຄົນເຈັບທີ່ຖືກກຳນົດໃຫ້ເປັນຄົນຂັດສົນທາງດ້ານການເງິນ.

D. **ການດູແລດ້ານການແພດທີ່ຈຳເປັນ:** ການບໍລິການທີ່ສອດຄ່ອງກັບການກວດພະຍາດ ແລະ ການປິ່ນປົວໂຣກຂອງຄົນເຈັບ, ສອດຄ່ອງກັບ ມາດຕະຖານການປະຕິບັດທາງການແພດທີ່ເໝາະສົມ, ຈຳເປັນເພື່ອສະໜອງຄວາມຕ້ອງການທາງການແພດຂອງຄົນເຈັບ ແລະ ເປັນເຫດ ຜົນທີ່ນອກເໜືອຄວາມສະດວກສະບາຍຂອງຄົນເຈັບ ຫຼື ແພດຂອງຄົນເຈັບ ຫຼື ຜູ້ໃຫ້ຄວາມດູແລ ແລະ ການບໍລິການປະເພດທີ່ມີຄ່າໃຊ້ຈ່າຍ ໜ້ອຍສຸດ ເຊິ່ງຈະສະໜອງຄວາມຕ້ອງການທາງການແພດຂອງຄົນເຈັບຢ່າງສົມເຫດສົມຜົນ.

E. **ການປະຕິບັດເກັບເງິນທີ່ພິເສດ (“ECAs”):** ການປະຕິບັດທີ່ດຳເນີນໂດຍ ຫຼື ດຳເນີນແທນ BMC ຕໍ່ຄົນເຈັບທີ່ຮັບການຊຳລະຂອງໃບບິນສຳລັບການດູແລ, ຖ້າການປະຕິບັດດັ່ງກ່າວກ່ຽວພັນກັບສິ່ງດັ່ງຕໍ່ໄປນີ້:

a. ເລື່ອນກຳນົດ ຫຼື ປະຕິເສດ ຫຼື ຮຽກຮ້ອງການຊຳລະຂອງໃບບິນທີ່ຍັງບໍ່ທັນຊຳລະຢ່າງຖືກຕ້ອງໃນອະດີດ ກ່ອນສະໜອງການດູແລທາງການແພດທີ່ຈຳເປັນ.  ບໍ່ວ່າຈະຢູ່ພາຍໃຕ້ສະພາບການໃດກໍຕາມ, BMC ຈະບໍ່ຮັບຜິດຊອບກິດຈະກຳເກັບໜີ້ທີ່ ແຊກແຊງກັບການສະໜອງຂອງດູແລທາງການແພດສຸກເສີນ.

b. ລວມທັງຂະບວນການທີ່ຖືກຕ້ອງຕາມກົດໝາຍ ຫຼື ຄຳຕັດສິນຂອງສານ (ຕົວຢ່າງລວມເຖິງການເລີ່ມການດຳເນີນຄະດີແພ່ງ, ການວາງສິດທິຍຶດໜ່ວງ, ການຍຶດເອົາຊັບສິນຕາມຄຳສັ່ງສານ ຫຼື ການອາຍັດຄ່າຈ້າງ). ເຖິງຢ່າງໃດກໍຕາມ, ນະໂຍບາຍນີ້ບໍ່ນຳໃຊ້ກັບ ສ່ວນໜຶ່ງຂອງການບໍລິການຂອງຄົນເຈັບທີ່ໄດ້ຊຳລະ ຫຼື ອາດຊຳລະໂດຍພາກສ່ວນທີໜຶ່ງ ຫຼື ສາມ ເຊັ່ນ ບໍລິສັດປະກັນໄພລົດ ຫຼື ຄ່າຕອບແທນພະນັກງານ. ຕາມທີ່ລັດ Iowa ໄດ້ອະນຸຍາດ, ເມື່ອຄົນເຈັບສະເໜີການບໍລິການຫຼັງຈາກອຸບະຕິເຫດ ຫຼື ການບາດ ເຈັບ, BMC ອາດວາງສິດຍຶດໜ່ວງຕໍ່ການຊຳລະຂອງພາກສ່ວນທີສາມ ແລະ ສິດຍຶດໜ່ວງບໍ່ແມ່ນ ECA.

c. ການຍື່ນຄຳຮ້ອງຟ້ອງລົ້ມລະລາຍໃດໜຶ່ງບໍ່ແມ່ນ ECA.

F. **ຂໍ້ສະຫຼຸບໃນພາສາທຳມະດາ:** ເອກະສານທີ່ສະໜອງຂໍ້ສະຫຼຸບຂອງ ໂຄງການດູແລຊຸມຊົນຂອງ BMC ແລະ ນະໂຍບາຍການຊ່ວຍເຫຼືອ ດ້ານການເງິນຮ້າຍແຮງ A-1006.

G. **ໃບຖະແຫຼງການຮຽກເກັບຫຼັງຈາກອອກໂຮງໝໍ:** ໃບຖະແຫຼງການຮຽກເກັບແມ່ນສະໜອງໃຫ້ກັບຄົນເຈັບຫຼັງຈາກທີ່ຄົນເຈັບໄດ້ຮັບການບໍລິການດ້ານການດູແລສຸຂະພາບ ແລະ ໄດ້ອອກ ຈາກໂຮງໝໍແລ້ວ.

H. **ໄລຍະເວລານຳໃຊ້:** ໄລຍະເວລາທີ່ເລີ່ມຕົ້ນຕັ້ງແຕ່ມື້ທີ່ມອບການດູແລໃຫ້ກັບຄົນເຈັບ ແລະ ສິ້ນສຸດລົງບໍ່ກາຍ (1) 240 ມື້ຫຼັງຈາກໃບ ຖະແຫຼງການຮຽກເກັບຫຼັງຈາກຊຳລະຄັ້ງທຳອິດ; (2) ກຳນົດເວລາຕາມທີ່ລະບຸໄວ້ໃນແຈ້ງການທີ່ຈັດໃຫ້ກັບຄົນເຈັບຕາມທີ່ໄດ້ບັນລະຍາຍ ໃນພາກທີ IV.B.a.i ຂອງນະໂຍບາຍນີ້ ຫຼື (3) ກຳນົດເວລາສຳລັບການສະໜອງຂໍ້ມູນເພີ່ມເຕີມໄດ້ຜ່ານໄປ.

## IV. ລະບຽບການ

A. ສູນການແພດ Broadlawns ຈະສະໜອງທາງເລືອກທີ່ສົມເຫດສົມຜົນໃຫ້ກັບຄົນເຈັບທີ່ກຳລັງພະຍາຍາມຢ່າງສຸດຄວາມສາມາດເພື່ອຊຳລະໃບບິນຂອງພວກເຂົາ. ເຖິງຢ່າງໃດກໍຕາມ, BMC ຄາດຫວັງໃຫ້ຄົນເຈັບຊຳລະຈຳນວນທີ່ເຖິງກຳນົດສຳລັບການບໍລິການທາງດ້ານສຸຂະພາບທີ່ໄດ້ໃຫ້ບໍລິການ ແລະ ຈະຊອກຫາການເກັບໜີ້ເມື່ອຈຳເປັນ.

B. BMC ຈະບໍ່ມີສ່ວນຮ່ວມໃນການປະຕິບັດການເກັບໜີ້ທີ່ພິເສດກັບຄົນເຈັບເພື່ອຮັບການຊຳລະສຳລັບການດູແລ ຈົນກວ່າຈະພະຍາຍາມ ຢ່າງສົມເຫດສົມຜົນເພື່ອເຮັດໃຫ້ຄົນເຈັບເຂົ້າໃຈກ່ຽວກັບການມີຢູ່ຂອງການຊ່ວຍເຫຼືອດ້ານການເງິນ ແລະ ຂະບວນການໃນການສະໝັກເພື່ອ ການຊ່ວຍເຫຼືອດ້ານການເງິນ.

a. ຄວາມພະຍາຍາມຢ່າງສົມເຫດສົມຜົນລວມເຖິງການປະຕິບັດທຸກຢ່າງດັ່ງຕໍ່ໄປນີ້ຂອງໂຮງໝໍ:

   i. ການສະໜອງແຈ້ງການທີ່ເປັນລາຍລັກອັກສອນ (ແລະ ພະຍາຍາມທີ່ຈະສະໜອງແຈ້ງການທາງປາກເປົ່າ) ໃຫ້ກັບ ຄົນເຈັບວ່າ ການຊ່ວຍເຫຼືອດ້ານການເງິນແມ່ນມີຢູ່, ສະໜອງຂໍ້ສະຫຼຸບໃນພາສາທຳມະດາ, ລະບຸ ECAs ວ່າໂຮງໝໍອາດຈະປະຕິບັດການຫາກຈຳເປັນ ແລະ ກຳນົດເວລາຫຼັງຈາກທີ່ ECAs ເລີ່ມຕົ້ນຂຶ້ນ ເຊິ່ງບໍ່ໃຫ້ໄວກ່ອນ 30 ມື້ຫຼັງຈາກວັນທີທີ່ການແຈ້ງການເປັນລາຍລັກອັດສອນຖືກສະໜອງ.

   ii. ແຈ້ງການໃຫ້ກັບຄົນເຈັບ ທີ່ສົ່ງໃບສະໝັກສຳລັບການຊ່ວຍເຫຼືອດ້ານການເງິນທີ່ຍັງບໍ່ຄົບຖ້ວນ ຮູ້ເຖິງວິທີການເຮັດ ໃຫ້ມັນຄົບຖ້ວນຢ່າງເໝາະສົມ ແລະ ມອບໂອກາດທີ່ສົມເຫດສົມຜົນໃຫ້ຄົນເຈັບປະຕິບັດຕາມ. ໂຮງໝໍຕ້ອງຈັດກຽມການແຈ້ງການນີ້ເປັນລາຍລັກອັກສອນ ແລະ ຕ້ອງສະໜອງຂໍ້ມູນຕິດຕໍ່ສຳລັບຊັບພະຍາກອນເພື່ອຊ່ວຍຄົນເຈັບໃນການເຮັດໃຫ້ການລົງສະໝັກຄົບຖ້ວນ.

   iii. ກຳນົດກ່ຽວກັບການມີສິດໃນການຊ່ວຍເຫຼືອດ້ານການເງິນ ຖ້າຄົນເຈັບສົ່ງໃບສະໝັກສຳລັບການຊ່ວຍເຫຼືອດ້ານການເງິນທີ່ຄົບຖ້ວນໃນລະຫວ່າງຊ່ວງໄລຍະການລົງສະໝັກ.

b. ຖ້າ BMC ເລື່ອນກຳນົດ ຫຼື ປະຕິບັດການດູແລ ອີງຕາມໃບບິນທີ່ຍັງບໍ່ໄດ້ຊຳລະສຳລັບການດູແລກ່ອນໜ້າ, ແລ້ວເງື່ອນໄຂ ຂອງຄວາມພະຍາຍາມຢ່າງສົມເຫດສົມຜົນກໍແຕກຕ່າງກັນ. BMC ຕ້ອງສະໜອງແບບຟອມສະໝັກ FAP ໃຫ້ກັບຄົນເຈັບ ແລະ ການແຈ້ງການເປັນລາຍລັກອັກສອນວ່າ ການຊ່ວຍເຫຼືອດ້ານການເງິນມີຢູ່ ແລະ ກຳນົດເວລາລ້າສຸດໃນການສົ່ງໃບ ສະໝັກ FAP ນີ້ສຳລັບການດູແລທີ່ຜ່ານມາ. ກຳນົດເວລາຕ້ອງບໍ່ໄວກວ່າ 30 ວັນຫຼັງຈາກວັນທີທີ່ແຈ້ງການເປັນລາຍລັກອັກສອນຖືກຈັດກຽມ ຫຼື 240 ວັນຫຼັງຈາກວັນທີທີ່ໃບຖະແຫຼງການຮຽກເກັບຫຼັງຈາກອອກໂຮງໝໍສຳລັບຄ່າການດູແລທີ່ໃຫ້ບໍລິການກ່ອນໜ້າ. ຖ້າໃບສະໝັກ FAP ຖືກສົ່ງພາຍໃນໄລຍະເວລາເຫຼົ່ານີ້, ແລ້ວ BMC ຕ້ອງດຳເນີນການລົງສະໝັກບົນພື້ນຖານຄວາມເລັ່ງດ່ວນ.

C. BMC ຈະບໍ່ພະຍາຍາມເກັບໜີ້ຈາກຊັບສິນຂອງຄົນເຈັບທີ່ຖືກຍົກເວັ້ນຈາກກິດຈະກຳເກັບໜີ້ດັ່ງກ່າວ ເຊິ່ງຢູ່ພາຍໃຕ້ກົດລະບຽບຂອງລັດ ຫຼື ລັດຖະບານກາງ.

D. ຖ້າຄົນເຈັບສົ່ງໃບສະໝັກສຳລັບການຊ່ວຍເຫຼືອດ້ານການເງິນທີ່ຄົບຖ້ວນ ແລະ BMC ເຊື່ອວ່າ ຄົນເຈັບອາດມີຄຸນສົມບັດສຳລັບ Medicaid, BMC ອາດເລື່ອນເວລາໃນການກຳນົດການມີສິດ ຈົນກວ່າຫຼັງຈາກທີ່ຄົນເຈັບສະໝັກສຳລັບ Medicaid ແລະ ມີການກຳນົດທີ່ກ່ຽວຂ້ອງກັບ ການມີສິດໃນMedicaid ດັ່ງກ່າວ.

E. ຖ້າການມີສິດຂອງຄົນເຈັບສຳລັບການຊ່ວຍເຫຼືອດ້ານການເງິນບໍ່ຖືກກຳນົດ, ແລ້ວ BMC ຈະລະເວັ້ນການເລີ່ມຕົ້ນການປະຕິບັດເກັບໜີ້ ພິເສດເປັນເວລາ 100 ມື້ຫຼັງຈາກມື້ຂອງໃບຖະແຫຼງການຮຽກເກັບຫຼັງຈາກອອກໂຮງໝໍຄັ້ງທຳອິດ ບວກກັບເວລາກຳນົດເພີ່ມເຕີມອື່ນໆ ທີ່ສະໜອງໃຫ້ກັບຄົນເຈັບໃນແຈ້ງການທີ່ບັນລະຍາຍໄວ້ໃນພາກສ່ວນ IV.B.a.i ຂອງນະໂຍບາຍນີ້.

a. ຖ້າຄົນເຈັບສົ່ງໃບສະໝັກສຳລັບການຊ່ວຍເຫຼືອດ້ານການເງິນທີ່ຄົບຖ້ວນໃນເວລາໃດກໍຕາມພາຍໃນຊ່ວງໄລຍະການລົງສະໝັກ, ແລ້ວໂຮງໝໍຕ້ອງໂຈະ ECAs ໃດກໍຕາມ, ກຳນົດການມີສິດຂອງຄົນເຈັບສຳລັບການຊ່ວຍເຫຼືອດ້ານການເງິນ ແລະ ແຈ້ງການໃຫ້ກັບຄົນເຈັບວ່າ ການຊ່ວຍເຫຼືອດ້ານການເງິນມີຢູ່ ຫຼື ບໍ່.

i. ຖ້າຄົນເຈັບມີສິດໃນການຊ່ວຍເຫຼືອດ້ານການເງິນ ແຕ່ບໍ່ມີສິດສຳລັບການດູແລຟຣີ, ແລ້ວໂຮງໝໍຕ້ອງສະໜອງ ໃບຖະແຫຼງລະບຸຈຳນວນເງິນທີ່ຄົນເຈັບຕິດໜີ້ໃຫ້ກັບຄົນເຈັບ.

ii. ຖ້າຄົນເຈັບມີສິດສຳລັບການຊ່ວຍເຫຼືອດ້ານການເງິນ, ໂຮງໝໍຕ້ອງກັບກັນ ECAs ທີ່ປະຕິບັດກ່ອນໜ້າ.

b. ຖ້າຄົນເຈັບສົ່ງໃບສະໝັກສຳລັບການຊ່ວຍເຫຼືອດ້ານການເງິນທີ່ບໍ່ຄົບຖ້ວນພາຍໃນຊ່ວງໄລຍະສະໝັກ, ໂຮງໝໍຕ້ອງໂຈະ ECAs ໃດກໍຕາມຈົນກວ່າຄົນເຈັບຈະເຮັດໃຫ້ໃບສະໝັກສຳລັບການຊ່ວຍດ້ານການເງິນຄົບຖ້ວນ ແລະ ໂຮງໝໍຈະກຳນົດວ່າ ຄົນເຈັບມີສິດສຳລັບການຊ່ວຍເຫຼືອດ້ານການເງິນ ຫຼື ບໍ່ ຫຼື ຈົນກວ່າຄົນເຈັບລົ້ມເຫຼວທີ່ຈະສະໜອງຂໍ້ມູນເພີ່ມເຕີ່ມເປັນເວລາ ສູງສຸດ 240 ມື້ຫຼັງຈາກມື້ທີ່ມີການຖະແຫຼງການຮຽກເກັບໜີ້ຫຼັງຈາກອອກໂຮງໝໍ, ກຳນົດເວລາທີ່ກຳນົດໄວ້ໃຫ້ກັບຄົນເຈັບ ໃນແຈ້ງການ ຕາມທີ່ລະບຸໄວ້ໃນພາກສ່ວນທີ IV.B.a.i ຂອງນະໂຍບາຍນີ້ ແລະ ກຳນົດເວລາສຳລັບການຕອບສະໜອງ ຕໍ່ການກຳນົດແບບສັນນິຖານເອົາເອງຂອງການມີສິດສຳລັບການຊ່ວຍເຫຼືອດ້ານການເງິນທີ່ສົມບູນ.

c. ໂຮງໝໍອາດເລີ່ມຕົ້ນ ECAs ຖ້າຄົນເຈັບບໍ່ໄດ້ສົ່ງໃບສະໝັກສຳລັບການຊ່ວຍເຫຼືອດ້ານການເງິນທີ່ຄົບຖ້ວນເປັນເວລາ 240 ມື້ຫຼັງຈາກມື້ທີ່ມີການຖະແຫຼງການຮຽກເກັບໜີ້ຫຼັງຈາກຄົນເຈັບອອກໂຮງໝໍ ແລະ ຖ້າເງື່ອນໄຂຂອງການແຈ້ງການຖືກບັນລຸ.

F. ສຳລັບຄົນເຈັບທີ່ມີການດູແລຫຼາຍຕອນທີ່ BMC, ໂຮງໝໍອາດບັນລຸເງື່ອນໄຂການແຈ້ງການ ພາຍໃຕ້ນະໂຍບາຍນີ້ໃນເວລາດຽວກັນ. ຖ້າ BMC ຮ່ວມໃບບິນທີ່ຍັງບໍ່ທັນຊຳລະສຳລັບການດູແລເປັນເວລາຫຼາຍຕອນເຂົ້າກັນ, ມັນອາດຈະບໍ່ເລີ່ມຕົ້ນ ECA(s) ຈົນກວ່າຫຼັງຈາກຊ່ວງ ໄລຍະການລົງສະໝັກສຳລັບການດູແລຕອນລ້າສຸດ.

ອະນຸມັດໂດຍຄະນະກຳມະການຈັດການ ໃນວັນທີ 18 ມິຖຸນາ 2019

____________________________________

Jody Jenner, ປະທານກຳມະການບໍລິຫານ